# ຂະບວນການລາວເພື່ອສິດທິມະນຸດ (ຂລສມ)

**Mouvement Lao pour les Droits de l'Homme (MLDH)**

**Lao Movement for Human Rights (LMHR)**

**BP 123 – 77206 Torcy Cedex, France – Téléphone/Fax: 33 (0) 1 60 06 57 06**

**e-mail : mldh@mldh-lao.org**


---------------------------------------------------

ຖແລງຂ່າວ ປາຣີສ, ໒໐ ກໍຣະກະດາ ໒໐໐໗

## ສະແດງຄວາມເຄົາຣົບອຸທິດ ເຖີງນັກຕໍ່ສູ້ ເພື່ອເສຣີພາບ

## ແຝງ ສັກຈິດຕະພົງ

ຂະບວນການລາວເພື່ອສິດທິມະນຸດ (ຂລສມ) ໄດ້ຮັບຂ່າວດ້ວຍຄວາມໂສກເສົ້າໃນການເສັຽຊີວິດຂອງທ່ານ ແຝງ ສັກຈິດຕະພົງ, ນຶ່ງໃນສາມຜູ້ນຳຂອງ « ຂະບວນ ສັງຄົມ-ປະຊາທິປະໄຕ », ທີ່ໄດ້ຖືກກັກຂັງເປັນເວລາ ໑໔ ປີ ຢູ່ໃນຄຸກທໍຣະມານຂອງ ສາທະລະນະລັດປະຊາທິປະໄຕປະຊາຊົນລາວ (ສປປລ) ດ້ວຍຂໍ້ຫາທີ່ໄດ້ຮຽກຮ້ອງໃຫ້ມີການປ່ຽນແປງໄປສູ່ຣະບອບປະຊາທິປະໄຕ ແລະ ຊັດທອດໄປເຖີງຄວາມໂຫດຮ້າຍບັກຜ່ອງຂອງຣະບອບຜະເດັດການ.

ຫຼັງຈາກຖືກກັກຂັງເປັນເວລາ ໑໔ ປີ ຢ່າງທໍຣະມານແບບໄຮ້ມະນຸສທັມ, ທ່ານ ແຝງ ໄດ້ເສັຽຊີວິດໃນວັນທີ ໐໖ ກໍຣະກະດາ ໒໐໐໗ ຫຼັງຈາກຖືກປ່ອຍຕົວພຽງ ສອງປີເຄິ່ງ, ໂດຍການທ້ອນໂຮມຕໍ່ວ່າຈາກຂະບວນການລາວ ແລະ ສາກົນ. ການເສັຽຊີວິດ, ຣວມອາຍຸໄດ້ ໖໕ ປີ, ຂອງທ່ານຊຶ່ງຖືວ່າເປັນນັກໂທດການເມືອງດ້ານແນວຄິດ ຂອງອົງການນິຣະໂທດສາກົນ ໄດ້ຮູ້ຈັກພາຍລຸນມາຈາກນັກຂ່າວຕ່າງປະເທດໃນວັນທີ ໑໘ ກໍຣະກະດາ.

ຂລສມ ແລະ ສະມາຊິກທຸກຄົນຂໍສະແດງຄວາມເຄົາຣົບອຸທິດແກ່ນັກຕໍ່ສູ້ເພື່ອເສຣີພາບທ່ານນີ້, ພ້ອມຂໍສະແດງນັບຖືຄວາມກ້າຫານໃນການຕໍ່ສູ້ແບບສັນຕິວິທີຂອງທ່ານ ແຝງ ສັກຈິດຕະພົງ ໄປສູ່ ເສຣີພາບ, ປະຊາທິປະໄຕ ແລະ ຄວາມຍຸຕິທັມຂອງສັງຄົມ ຢູ່ໃນລາວ.
ພວກຂ້າພະເຈົ້າຂໍສະແດງຄວາມໄວ້ອາລັຍອັນເສົ້າໂສກມາເຖີງຄອບຄົວແລະເພື່ອນມິຕຂອງ « ຂະບວນ ສັງຄົມ-ປະຊາທິປະໄຕ » ທຸກທ່ານຊຶ່ງຍັງດຳເນີນການຕໍ່ສູ້ຕໍ່ໄປດ້ວຍຄວາມຫວັງຢ່າງຕັ້ງໃຈຢູ່ພາຍໃນປະເທດ.

ທ່ານ ແຟງ ສັກຈິດຕະພົງ ຊຶ່ງເປັນລັດຖະການຊັ້ນສູງຂອງກະຊວງຍຸຕິທັມ, ໄດ້ຖືກຈັບໃນເດືອນ ຕຸລາ ໑໙໙໐ ຮ່ວມກັບລັດຖະມົນຕີເກົ່າສອງທ່ານຄື ທອງສຸກ ສາຍສັງຄີ ແລະ ລັດສະໝີ ຄໍາຟຸຍ ໃນການຮັດຈົດໝາຍຮຽກຮ້ອງເຖົ່າຜູ້ນໍາຂອງພັກໂທນ ເພື່ອການປ່ຽນແປງແບບສັນຕິຂອງລະບອບ ການປົກຄອງ ແລະ ການເລືອກຕັ້ງແບບມີຫຼາຍພັກການເມືອງ. ພວກເຂົາເຈົ້າໄດ້ຖືກຈໍາໂທດໂດຍ ການຕັດສິນແບບສານປອມແປງ ໃຫ້ຈໍາຄຸກທໍຣະມານເປັນເວລາ ໑໔ ປີ ໂດຍຕັ້ງຂໍ້ຫາແບບຕົວະຕົ້ມ ວ່າເປັນ « ພວກຫາ້ງຫາການກະບົດ », ເປັນ »ພວກໂຄສະນາຕໍ່ຕ້ານ ຕໍ່ສາທາລະນະລັດປະຊາທິ ປະໄຕລາວ » ແລະ ເປັນ »ພວກກ່າວຄໍາເທັດດ້ວຍການຂີດຂຽນແລະປາກເວົ້າ ».

ທັງສາມທ່ານໄດ້ຖືກຂັງຢູ່ໃນຄຸກແບບທໍຣະມານແສນສາຫັດທີ່ຄ້າຍ ສົບຫ່າວ (ທາງຕະເວັນອອກ ສ່ຽງເໜືອຂອງລາວ), ຊຶ່ງທ່ານ ທອງສຸກ ສາຍສັງຄີ ໄດ້ເສັຽຊີວິດໃນເດືອນ ກຸມພາ ໑໙໙໘ ດ້ວຍ ຂາດການປິ່ນປົວພະຍາດ. ສອງທ່ານທີ່ເຫຼືອຄື ທ່ານ ແຟງ ສັກຈິດຕະພົງ ແລະ ລັດສະໝີ ຄໍາຟຸຍ ໄດ້ຖືກປ່ອຍຕົວໃນເດືອນ ທັນວາ ໒໐໐໔ ຫຼັງຈາກຖືກຈໍາຄຸກເປັນເວລາ ໑໔ ປີ ເຕັມ.

**ຂລສມ** ຂໍສະແດງຄວາມນັບຖືອູ້ນຊູໃນຄວາມກ້າຫານຂອງບັນດາທ່ານເລົ່ານີ້, ແລະຂໍຖືໂອກາດນີ້ ທົບທວນຄືນຕື່ມອີກວ່າຍັງມີນັກໂທດທີ່ມີຄວາມຄິດຕ່າງກັບພັກລັດຍັງຖືກກັກຂັງຢູ່ໃນ ສປປລາວ, ໂດຍສະເພາະນັກຕໍ່ຕ້ານ ລາວມົ້ງ, ຜູ້ຮັບຜິດຊອບທາງສາສນາຄຣິສຕຽນ, ແລະຫົວໜ້າ « ຂະບວນ ລຸກຮື້ຂອງນັກສຶກສາ ວັນທີ ໒໖ ຕຸລາ ໑໙໙໙ ».

ພວກຂ້າພະເຈົ້າຂໍຮຽກຮ້ອງຕື່ມອີກຕໍ່ ປະເທດຝຼັ່ງ, ສະຫະພັນເອີຣົບ, ອົງການສະຫະປະຊາຊາດ, ປະເທດຍີ່ປຸ່ນ, ສະຫະຣັດອະເມຣິກາ, ຈົ່ງສືບຕໍ່ການໜີບເຕັງຕໍ່ ສປປລາວ ໃຫ້ທໍາການປົດປ່ອຍບັນດາ ນັກໂທດການເມືອງ ຫຼື ທີ່ມີຄວາມຄິດແຕກຕ່າງດັ່ງກ່າວນັ້ນ ; ພ້ອມດ້ວຍການຕໍ່ວ່າໃຫ້ຣະບອບຜະ ເດັດການລາວ ຈົ່ງໄດ້ດໍາເນີນການປະຕິຮູບການປົກຄອງໄປສູ່ ເສຣີພາບ, ປະຊາທິປະໄຕ, ແລະ ການທ້ອນໂຮມຊາດ.